415563

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-------------------

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 1797/ອຄ.ກຂອ

ນະຄອນຫຼວງວຽງຈັນ, ວັນທີ 18 ທັນວາ 2006.

ເຖິງ: ທ່ານຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າ ແຂວງ ແລະ ນະຄອນຫຼວງວຽງຈັນ.

ເລື່ອງ: ການມອບໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ ເປັນຜູ້ຄຸ້ມຄອງ ແລະ ອອກອະນຸຍາດ ນຳເຂົ້າລົດ ຮັບໃຊ້ການຜະລິດທາງກົງ.

- ອີງຕາມຂໍ້ກຳນົດວ່າດ້ວຍການຄຸ້ມຄອງການນຳເຂົ້າ ແລະ ຈຳໜ່າຍລົດ ເລກທີ 0105/ກຄ.ຕປທ, ລົງວັນທີ 25/1/2002.

- ອີງຕາມແຈ້ງການກ່ຽວກັບລາຍການສິນຄ້າທີ່ຄວບຄຸມການນຳເຂົ້າ ແລະ ສົ່ງອອກ ສະບັບ ເລກທີ 1376/ກຄອ.ກຂອ, ລົງວັນທີ 10/10/2006.

- ອີງຕາມແຈ້ງການຂອງຄະນະກຳມະການແຜນການ ແລະ ການລົງທຶນພາຍໃນ ແລະ ຕ່າງປະເທດ ສະບັບເລກທີ 364/ຄລທ.ທກ, ລົງວັນທີ 17/3/2006 ກ່ຽວກັບການເຊັນອະນຸຍາດ ນຳເຂົ້າ ວັດຖຸດິບ, ວັດຖຸອຸປະກອນ, ເຄື່ອງຈັກ ແລະ ພາຫະນະຮັບໃຊ້ວຽກງານ ທາງກົງຂອງບໍລິສັດ ລົງທຶນ ພາຍໃນ ແລະ ຕ່າງປະເທດ.

ກະຊວງອຸດສາຫະກຳ ແລະ ການຄ້າ ແຈ້ງມາຍັງທ່ານຊາບວ່າ: ເພື່ອເປັນການສົ່ງເສີມ ການລົງທຶນ ແລະ ເພື່ອປັບປຸງຂັ້ນຕອນການນຳເຂົ້າ ແລະ ສົ່ງອອກ ໃຫ້ສະດວກ ແລະ ສອດຄ່ອງກັບສະພາບປະຈຸບັນ, ຈຶ່ງແຈ້ງມາຍັງທ່ານ ປະຕິບັດດັ່ງນີ້:

1. ມອບໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ ເປັນຜູ້ຄຸ້ມຄອງ ແລະ ອະນຸຍາດການນຳເຂົ້າລົດຮັບໃຊ້ການຜະລິດທາງກົງທີ່ໄດ້ຮັບນະໂຍບາຍຫຼຸດຜ່ອນພາສີ-ອາກອນ 1% ຫຼື ຍົກເວັ້ນພາສີ-ອາກອນ ຈາກປະທານຄະນະກຳມະການລົງທຶນພາຍໃນແລະຕ່າງປະເທດ ຂັ້ນແຂວງ,ນະຄອນຫຼວງວຽງຈັນ. ລົດຮັບໃຊ້ການຜະລິດທາງກົງ ໝາຍເຖິງ : ລົດດ້າມ, ລົດບັນທຸກ, ລົດດູດ, ລົດເກດ, ລົດຈົກ, ລົດລາກ, ລົດໂລ, ລົດຂົນສົ່ງ, ລົດເມຂະໜາດ 16ບ່ອນນັ່ງ ຂຶ້ນໄປ, ລົດໄຖນາທຸກປະເພດ, ລົດນ້ຳ, ລົດຂົນສົ່ງນ້ຳມັນ, ລົດສີດຢາງ, ລົດໂຮງໝໍ, ລົດດັບເພີງ ແລະ ປະເພດອື່ນໆ ທີ່ມີລັກສະນະ ຮັບໃຊ້ການຜະລິດທາງກົງ.
2. ຫຼັກການຂອງການອະນຸຍາດ: ອະນຸຍາດຕາມແບບຟອມທີ່ໄດ້ຄັດຕິດມາພ້ອມນີ້, ມີ 6ໃບ, ສຳເນົາ 2 ໃບ ແລະ ສົ່ງໃຫ້ຜູ້ນຳເຂົ້າ 4ໃບ, ເອກະສານຊຸດໜຶ່ງສາມາດອະນຸຍາດ ນຳເຂົ້າລົດໄດ້

ຫຼາຍຄັນ. ເອກະສານທີ່ປະກອບມີຄື: ໃບທະບຽນວິສາຫະກິດ, ໃບແຈ້ງລາຄາ, ເອກະສານອະນຸມັດ ຈາກຄະນະກຳມະການແຜນການແລະການລົງທຶນ ແຂວງ, ນະຄອນຫຼວງວຽງຈັນ.

3. ດ່ານທີ່ອະນຸຍາດໃຫ້ນຳເຂົ້າໄດ້ ສະເພາະ ແຕ່ ດ່ານສາກົນທີ່ເປີດເປັນທາງການເທົ່ານັ້ນ.
4. ການເກັບຄ່າທຳນຽມຈາກການບໍລິການນຳເຂົ້າລົດ: ຜູ້ນຳເຂົ້າລົດຕ້ອງຈ່າຍຄ່າທຳນຽມ ແບບຟອມໃຫ້ໜ່ວຍງານ ທີ່ອອກອະນຸຍາດ ຈຳນວນ 7.000 ກີບ ( ເຈັດພັນກີບ) ຕໍ່ຊຸດ. ນອກນັ້ນ ບໍ່ໃຫ້ເກັບຄ່າບໍລິການ ຫຼື ຄ່າໃຊ້ຈ່າຍຕ່າງໆ ຕື່ມອີກເດັດຂາດ.
5. ການລາຍງານຂໍ້ມູນການນຳເຂົ້າລົດ: ໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ ລາຍງານຂໍ້ມູນ ການນຳເຂົ້າລົດ ຂອງພາກສ່ວນ ດັ່ງກ່າວ ເປັນແຕ່ລະອາທິດໃຫ້ກົມການນຳເຂົ້າ ແລະ ສົ່ງອອກ ຕາມຕາຕະລາງ ທີ່ໄດ້ຄັດຕິດ ມາພ້ອມນີ້.
6. ສິ່ງທີ່ຄວນເອົາໃຈໃສ່: ໃຫ້ອະນຸຍາດສະເພາະແຕ່ລົດ ທີ່ນຳເຂົ້າມາເພື່ອຮັບໃຊ້ການ ຜະລິດ ທາງກົງທີ່ໄດ້ລະບຸໄວ້ໃນຂໍ້ 1. ຂ້າງເທິງເທົ່ານັ້ນ. ບໍ່ໃຫ້ອະນຸຍາດລົດຮັບໃຊ້ບໍລິການ ເຊັ່ນ: ລົດເກັງ, ລົດກະບະ, ລົດຈິບ, ລົດຕູ້ 15 ບ່ອນນັ່ງລົງມາ, ລົດຈັກ ແລະ ສິ້ນສ່ວນປະກອບ ລົດເປັນຄັນທຸກປະເພດ.
7. ມອບໃຫ້ກົມການນຳເຂົ້າ ແລະ ສົ່ງອອກ ລົງແນະນຳ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ ໃນການຈັດຕັ້ງປະຕິບັດ ເພື່ອຫຼີກເວັ້ນຊ່ອງຫວ່າງ ແລະ ເພື່ອແກ້ໄຂຂໍ້ຫຍຸ້ງຍາກ ໃຫ້ທັນເວລາ.
8. ແຈ້ງການສະບັບນີ້ ເລີ່ມຈັດຕັ້ງໄດ້ ນັບແຕ່ວັນທີ 01/01/2007 ເປັນຕົ້ນໄປ.

ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມນີ້.

ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ,

ສຽວສະຫວາດ ສະແຫວງສຸກສາ

ບ່ອນສົ່ງ:

- ກອງເລຂາລັດຖະບານ "ເພື່ອລາຍງານ "
- ຄະນະກຳມະການແຜນການ ແລະການລົງທຶນ " ເພື່ອຊາບ"
- ກະຊວງ ຄຂປກ " ເພື່ອຊາບ"
- ກະຊວງການເງິນ " ເພື່ອຊາບ"
- ເຈົ້າແຂວງ, ເຈົ້າຄອງ ນະຄອນຫຼວງວຽງຈັນ " ເພື່ອຊາບ"